# ບົດຂ່າວ

## ງານພົບປະລູກຄ້າເຄື່ອງຮູດບັດ (EDC)
## ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ປະຈຳປີ 2017
## ນະຄອນຫຼວງວຽງຈັນ, ວັນທີ 30/03/2017 ທີ່ ໂຮງແຮມ ແລນມາກ ລິເວີໄຊ




ໃນຄ່ຳຄືນວັນທີ 30/03/2017 ທີ່ ໂຮງແຮມ ແລນມາກ ລິເວີໄຊ ໄດ້ຈັດງານລ້ຽງພົບປະ ແລະ ຂອບໃຈ ລູກຄ້າທີ່ໃຊ້ເຄື່ອງຮູດບັດ EDC ຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ. ໃຫ້ກຽດເຂົ້າຮ່ວມໂດຍ ທ່ານ ພູຂົງ ຈັນທະຈັກ ຜູ້ອຳນວຍການໃຫຍ່ ທຄຕລ, ຄະນະຜູ້ບໍລິຫານ ແລະ ພະນັກງານ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ, ພ້ອມດ້ວຍ ບັນດາທ່ານແຂກຜູ້ມີກຽດ, ບັນດາທຸລະກິດ ແລະ ຫ້າງຮ້ານຕ່າງໆທີ່ເປັນຕົວແທນເຄື່ອງຮູດບັດ EDC ຂອງ ທຄຕລ.

ທຄຕລ ເປັນທະນາຄານໜຶ່ງທີ່ມຸ້ງໝັ້ນ ໃນການໃຫ້ບໍລິການດ້ານການທະນາຄານເພື່ອອຳນວຍຄວາມສະດວກສະບາຍໃຫ້ແກ່ລູກຄ້າ, ໃຫ້ການບໍລິການທີ່ທົ່ວເຖິງ ແລະ ມີການນຳໃຊ້ລະບົບເຕັກໂນໂລຢີ ທີ່ທັນສະໄໝເຂົ້າມາໃນການໃຫ້ບໍລິການຢ່າງບໍ່ຢຸດຢັ້ງ. ທະນາຄານຂອງພວກເຮົາແມ່ນເປັນທະນາຄານທີ່ມີຈຳນວນຜູ້ຊົມໃຊ້ຜະລິດຕະພັນບັດອີເລັກໂທຼນິກ ກວມເອົາສັດສ່ວນຕະຫຼາດທີ່ສູງສຸດ ແລະ ທະນາຄານກໍ່ມີຄວາມໂດດເດັ່ນໃນດ້ານບໍລິການຜະລິດຕະພັນບັດ. ມາຮອດທ້າຍປີ 2016, ທຄຕລ ມີຈຳນວນບັດ ATM ແລະ ບັດນັກສຶກສາເປັນທັງບັດ ATM ຈຳນວນ **499,245 ບັດ**, ອອກບັດ VISA ໄດ້ **11,574 ບັດ**, ມີຕູ້ ATM ໄວ້ບໍລິການລູກຄ້າຈຳນວນ **338 ຕູ້** ທົ່ວປະເທດ ແລະ ມີເຄື່ອງຮູດບັດ EDC ທັງໝົດ **1,790 ເຄື່ອງ.**

ໃນຍຸກປະຈຸບັນແບບວິທີການດຳລົງຊີວິດຂອງພວກເຮົາ ແມ່ນກຳລັງປ່ຽນໄປສູ່ຄວາມທັນສະໄໝ, ການຈັບຈ່າຍໃຊ້ສອຍ ທີ່ເລີ່ມຫັນໄປສູ່ແບບອີເລັກໂທຼນິກຫຼາຍຂຶ້ນ ແລະ ຫຼຸດຜ່ອນການນຳໃຊ້ເງິນສົດໃນສັງຄົມ. ການຊຳລະສະສາງຜ່ານຜະລິດຕະພັນບັດ ແລະ ເຄື່ອງຮູດບັດແມ່ນກຳລັງເປັນທີ່ນິຍົມ ແລະ ມີທ່າອ່ຽງ ທີ່ຈະເພີ່ມຂຶ້ນ ໃນອານາຄົດ.

ສະນັ້ນ, ບັນດາທຸລະກິດ ແລະ ຫ້າງຮ້ານຕ່າງໆ ຫາກມີເຄື່ອງຮູດບັດ ໄວ້ໃຫ້ບໍລິການແກ່ລູກຄ້າແລ້ວ, ກໍ່ຖືວ່າເປັນການຕະຫຼາດອັນດີຂອງທຸລະກິດທີ່ສາມາດອຳນວຍຄວາມສະດວກສະບາຍ ໃຫ້ແກ່ລູກຄ້າໄດ້ຫຼາຍຂຶ້ນ ໂດຍສະເພາະລູກຄ້າທີ່ບໍ່ໄດ້ພົກພາເງິນສົດເປັນຈຳນວນຫຼາຍ ໃຫ້ສາມາດຈັບຈ່າຍໃຊ້ສອຍໄດ້ງ່າຍຂຶ້ນກວ່າເກົ່າ.

## ຮູບພາບບັນຍາກາດໃນງານ




ງານພົບປະລູກຄ້ານຳໃຊ້ເຄື່ອງຮູດບັດ EDC
BCEL's EDC Merchants Annual Party


ທຄຕລ
BCEL
ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ປະລູກຄ້ານຳໃຊ້ເຄື່ອງຮູດບັດ EDC
EDC Merchants Annual Party
30/03/2017






ຂຽນຂ່າວໂດຍ: ນາງ ສຸກພາວັນ ມອນສີວົງໄຊ